# ຂ່າວປະຈຳໄຕມາດ II

## ສສສຄ




## ພິທີສະເຫຼີມ ສະຫຼອງ ວັນປະຈຳເດືອນສາກົນ

ໃນວັນທີ 26 ພຶດສະພາ 2023

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ), ຮູ້ສຶກດີໃຈ ແລະ ເປັນກຽດຢ່າງສູງ ທີ່ໄດ້ຮັບໂອກາດ ເປັນສ່ວນໜຶ່ງ ໃນການຈັດງານ " ວັນປະຈຳເດືອນສາກົນ 28 ພຶດສະພາ ປະຈຳປີ 2023 " ທີ່ຮັບທຶນຈາກ ອົງການ GIZ, ໃຫ້ກຽດເຂົ້າຮ່ວມ ເປີດພິທີໂດຍ ທ່ານ ບຸນທັນ ແສງມະນີ ຮອງ ພະແນກສຶກສາ ແລະ ກິລາ ຮ່ວມກັບ Dr Christina Seeberg Elverfldt Head of Development Cooperation ງານໄດ້ຈັດຂຶ້ນທີ່ ສະໂມສອນ ໂຮງຮຽນ ມສ ຕານມີໄຊ, ເຊິ່ງມີຜູ້ເຂົ້າຮ່ວມທັງຫມົດ 108 ທ່ານດັ່ງນີ້: ພະແນກສຶກສາທິການ ແລະ ກິລາ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກະຊວງສາທາລະນາສຸກ, ກົມສາມັນສຶກສາ, ພະແນກສຶກສາທິການ ແລະ ກິລາ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກະຊວງສາທາລະນາສຸກ, ໂຮງຮຽນ ມສ ຕານມີໄຊ, ມສ ດົງບັງ, ມສ ດອນໜູນ, ສະມາຄົມເຄືອຄ່າຍຜູ້ຕິດເຊື້ອເອສໄອວີ (APL+), ສູນໄວໜຸ່ມ, ອົງການຈັດຕັ້ງສາກົນ: ອົງການ ແພລນ ປະຈຳ ສປປລາວ, ອົງການແຄຣນາໆຊາດ ປະຈຳ ສປປ ລາວ, GIZ Laos ແລະ PFHA.

ຈຸດປະສົງ ໃນການຈັດງານນີ້ ແມ່ນເພື່ອເປັນການ ສະເຫຼີມສະຫຼອງ ວັນປະຈຳເດືອນສາກົນ ທີ 28 ພຶດສະພາ ປະຈຳປີ 2023 ແລະ ເປັນການໃຫ້ຂໍ້ມູນ, ປູກຈິດສຳນຶກ,ໃຫ້ເຫັນເຖິງຄວາມສຳຄັນ ຂອງ ວັນປະຈຳເດືອນສາກົນ ແລະ ການດູແລຕົວເອງ ໃນເວລາເປັນປະຈຳເດືອນ. ການຈັດງານໃນຄັ້ງນີ້ ເປັນຄັ້ງທຳອິດ ຂອງ ສສສຄ; ພາຍໃນງານກໍ່ໄດ້ມີການຈັດບູດສ ແລະ ມີກິດຈະກຳທີ່ຫລາກຫລາຍ ໂດຍການມີສ່ວນຮ່ວມຈາກ ຄູ່ຮ່ວມງານ ຫລາຍພາກສ່ວນ ແລະ ມີລາຍລະອຽດກິດຈະກຳຄື: 1. ການນຳສະເໜີເລື່ອງ ການເປັນປະຈຳເດືອນ, 2. ການຈັດບູດສ ເພື່ອໃຫ້ຜູ້ເຂົ້າຮ່ວມ ຢ້ຽມຢາມ ແລະ ຫລິ້ນເກມ ເອົາຂອງລາງວັນ ຈາກອົງກອນທີ່ເຂົ້າຮ່ວມ, 3. ການສະແດງໂຊ ຂອງນ້ອງໆນັກຮຽນ ຈາກ 3 ໂຮງຮຽນ, 4. ການຫຼິ້ນເກມ ຕອບຄຳຖາມ ຜ່ານເກມ Kahoot











# ຝຶກອົບຮົມ "ການໃຫ້ບໍລິການທີ່ເປັນມິດປິດລັບແກ່ເຍົາວະຊົນ ແລະ ໄວໜຸ່ມ" ໃຫ້ພະນັກງານໂຮງໝໍນ້ອຍ ແລະ ຜູ້ປະ ສານງານສາທາ ເມືອງປາກແບງ ແລະ ເມືອງຮຸນ

ໃນລະຫວ່າງວັນທີ **08-19** ພຶດສະພາ **2023**, ສສສຄ ຮ່ວມກັບ ຫ້ອງການສາທາລະນະສຸກ ເມືອງປາກແບງ ແລະ ເມືອງຮຸນ ແຂວງອຸດົມໄຊ ໄດ້ຈັດຊຸດຝຶກອົບຮົມ ດັ່ງກ່າວໃຫ້ແກ່ ພະນັກງານໂຮງໝໍນ້ອຍ **16** ແຫ່ງ ແລະ ຜູ້ປະສານງານສາທາເມືອງ ຄື: ນັກສຳມະນາກອນໄດ້ຮຽນຮູ້ກ່ຽວກັບ ເຍົາວະຊົນໄວໜຸ່ມ ແລະ ຜົນກະທົບ ດ້ານສາທາລະນະສຸກ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຂອງໄວໜຸ່ມ, ການໃຫ້ບໍລິການດ້ານສຸຂະພາບທີ່ເປັນມິດກັບເຍົາວະຊົນ ແລະ ໄວໜຸ່ມ, ພະຍາດຕິດຕໍ່ ທາງເພດສຳພັນ (ພຕພ-**STIs**), ການຖືພາ ແລະ ການເກີດລູກ, ການລຸລູກທີ່ບໍ່ປອດໄພ, ການຄຸມກຳເນີດ, **HIV** ແລະ ທິດສະດີ ຄວາຫຼາກຫຼາຍທາງເພດ

ເຊິ່ງຈັດຂຶ້ນຢູ່ **2**ເມືອງຄື: ເມືອງປາກແບງ ແລະ ຮຸນ.











ຈຸດປະສົງ:

1) ເພື່ອຝຶກອົບຮົມກ່ຽວກັບການບໍລິການທີ່ເປັນມິດປິດລັບແກ່ໄວໜຸ່ມໃຫ້ກັບພະນັກງານໂຮງໝໍນ້ອຍ **6** ແຫ່ງ ແລະ ຜູ້ປະສານງານສາທາເມືອງ

2) ເພື່ອໃຫ້ບັນດາພະນັກງານໂຮງໝໍນ້ອຍໄດ້ທົດລອງການໃຫ້ບໍລິການທີ່ເປັນມິດປິດລັບແກ່ໄວໜຸ່ມ

3) ເພື່ອໃຫ້ພະນັກງານໂຮງໝໍນ້ອຍໄດ້ຮູ້ເລື່ອງ **SOGIESC**

ທີມຄູຝຶກແມ່ນມາຈາກກະຊວງສາທາລະນະສຸກ ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ໜ່ວຍງານສົ່ງເສີມສຸຂະພາບ

ຜູ້ເຂົ້າຮ່ວມ **62** ທ່ານ: ຍິງ **45** ທ່ານ, ຊາຍ **17** ທ່ານ.

ສະໜັບສະໜູນໂດຍ: **Plan Finland &** ກະຊວງຕ່າງປະເທດຟິນແລນ

ພາຍໃຕ້ **Project My Body My future (MBMF)**





# ນ້ອງໆທີມ icy delight ລວມເງິນບໍລິຈາກໃຫ້ກັບເດັກນ້ອຍຢູ່ເຂດນອກ

ວັນທີ **2** ມິຖຸນາ **2023** ນ້ອງທີມ **Icy Delight** ຈາກໂຮງຮຽນ ກຽດຕິສັກ ນານາຊາດ ໄດ້ຮວບຮວມເງິນຈາກການເຮັດກິດຈະກຳຂາຍເຄື່ອງຫລາຍໄດ້ໃນໂຮງຮຽນ ໃນພາກວິຊາ **business** ແລະ ຈາກເງິນຂອງນ້ອງໆເອງ ມາບໍລິຈາກໃຫ້ກັບທີມງານ ສສສຄ, ເພື່ອໃຫ້ທີມງານຈັດຊື້ເຄື່ອງໃຊ້ທີ່ຈຳເປັນສຳລັບໄວໜຸ່ມເຊັ່ນ: ສະບູ, ແຟັບ, ຜ້າອະນາໄມ, ຢາຖູແຂ້ວ, ໄມ້ຖູແຂ້ວ, ເພື່ອໄປບໍລິຈາກໃຫ້ກັບເດັກນ້ອຍຢູ່ເຂດຊົນນະບົດ ໃນ **30** ບ້ານເປົ້າຫມາຍ ຢູ່ທີ່ ເມືອງຮຸນ ແລະ ເມືອງປາກແບງ ແຂວງອຸດົມໄຊ. ເຊິ່ງນຳພາທີມມອບເງິນໂດຍ ອາຈານ **Anna Olarte Marquez** ແລະ ຕາງ ໜ້າຮັບໂດຍ ທ່ານ ຈິນຕະນາ ຄຳມຸງຄຸນ ຈາກ ສສສຄ, ຈຳນວນງົບປະມານທີ່ບໍລິ ຈາກແມ່ນ **2,500,000** ກີບ.

<u>ໝາຍເຫດ:</u> ເນື່ອງຈາກນ້ອງໆ **icy delight** ບໍ່ສະດວກຈະເດີນທາງໄປບໍລິຈາກດ້ວຍຕົນເອງ ຈຶ່ງມາໃຫ້ ສສສຄເຮົາເປັນຕົວແທນໃນການໄປມອບຕໍ່ໃຫ້ກັບເດັກນ້ອຍຢູ່ເຂດຊົນນະບົດ










# ຝຶກອົບຮົມທວນຄືນ ການຈັດຕັ້ງປະຕິບັດ ກິດຈະກຳການກວດ ພະຍາດເຄື່ອນທີ່




ໃນລະຫວ່າງວັນທີ 9 ພຶດສະພາ 2023 ຫາ ວັນທີ 2 ເດືອນ ມິຖຸນາ 2023 ທີ່ຜ່ານມາ. ສະມາຄົມສົ່ງເສີມສຸຂະພາບຄອບຄົວ ຮ່ວມກັບ ພະແນກສາທາລະນະສຸກແຂວງ ຫຼວງນ້ຳທາ, ຫ້ອງການສາທາລະນະສຸກເມືອງ ວຽງພູຄາ, ເມືອງ ນາແລ, ແຂວງ ຫຼວງນ້ຳທາ ແລະ ພະແນກສາທາລະນະສຸກແຂວງ ບໍ່ແກ້ວ, ຫ້ອງການສາທາລະນະສຸກເມືອງ ຜາອຸດົມ, ເມືອງ ປາກທາ, ແຂວງ ບໍ່ແກ້ວ, ໄດ້ຈັດຕັ້ງປະຕິບັດກິດຈະກຳການຝຶກອົບຮົມຄືນໃນຫົວຂໍ້ "ການຈັດຕັ້ງປະຕິບັດກິດຈະກຳການກວດພະຍາດເຄື່ອນທີ່ໃຫ້ກັບຜູ້ໃຫ້ບໍລິການດ້ານສຸຂະພາບຂັ້ນໂຮງໝໍຊຸມຊົນເມືອງ ແລະ ໂຮງໝໍນ້ອຍເປົ້າໝາຍຂອງໂຄງການ ". ໂຮງໝໍຊຸມຊົນເມືອງ 4 ເມືອງ ແລະ ໂຮງໝໍນ້ອຍ 20 ແຫ່ງ.

# ການຝຶກອົບຮົມແມ່ນໄດ້ຈັດຕັ້ງຢູ່ເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ ແລະ ເມືອງຜາອຸດົມ, ແຂວງບໍ່ແກ້ວ

# ຈຸດປະສົງແມ່ນເພື່ອເສີມສ້າງ ຄວາມອາດສາມາດ ໃນການຈັດຕັ້ງ ປະຕິບັດກິດຈະກຳ ການກວດພະຍາດເຄື່ອນທີ່ (Mobile Clinic) ໃຫ້ກັບໂຮງໝໍນ້ອຍ ທີ່ເປັນເປົ້າໝາຍ ຂອງໂຄງການ. ເພື່ອເສີມສ້າງຄວາມອາດສາມາດ ທາງດ້ານວິຊາການໂດຍສະເພາະແມ່ນການວາງແຜນຄອບຄົວແບບຊົ່ວຄາວ, ໄລຍະຍາວ (ຢາຝັງ, ຮ່ວງອະນາໄມ)ໃຫ້ກັບຂັ້ນເມືອງ ແລະ ໂຮງໝໍນ້ອຍເປົ້າໝາຍຂອງໂຄງການ.











ນຳພາ ທີມໂດຍ ທ່ານ ດຣ. ນາງ ສຸດທິສຸກ ອິນທະວີໄລ, ຈາກສະມາຄົມສົ່ງເສີມສຸຂະພາບຄອບຄົວ, ທ່ານ ນາງ ລຳໄພ ລາດຊະວົງ, ຜູ້ປະສານງານໂຄງການຈາກພະແນກສາທາແຂວງ ຫຼວງນ້ຳທາ, ທ່ານນາງ ພວງເພັດ ບຸນມາແສງ, ຜູ້ປະສານງານໂຄງການຈາກພະແນກສາທາແຂວງ ບໍ່ແກ້ວ, ທ່ານ ດຣ. ນາງ ສົມປອງ ອາດທອງ, ຫົວໜ້າຫ້ອງການສາທາລະນະສຸກເມືອງ ວຽງພູຄາ. ທ່ານ ດຣ. ບຸນເລື່ອນ ສິດສົມພູ, ຫົວໜ້າຫ້ອງການສາທາລະນະສຸກເມືອງ ຜາອຸດົມ, ພ້ອມດ້ວຍທີມງານ ສສສຄ 4 ທ່ານ, ຜູ້ປະສານງານໂຄງການຂັ້ນແຂວງສອງແຂວງ 2 ທ່ານ, ຜູ້ປະສານງານຈາກຫ້ອງການສາທາລະນະສຸກເມືອງ 4 ເມືອງ ຈຳນວນ 8 ທ່ານ. ໂດຍມີຜູ້ເຂົ້າຮ່ວມໃນການຝຶກອົບຮົມທັງໝົດ 56 ທ່ານ, ເປັນຍິງ 42 ທ່ານ, ຊາຍ 14 ທ່ານ ທີ່ມາຈາກ ໂຮງໝໍຊຸມຊົນເມືອງ ວຽງພູຄາ, ເມືອງ ນາແລ, ເມືອງ ປາກທາ, ເມືອງ ຜາອຸດົມ ແລະ ໂຮງໝໍນ້ອຍ 20 ແຫ່ງທີ່ນອນໃນ 4 ເມືອງຄື: ເມືອງວຽງພູຄາ ແຂວງຫຼວງນ້ຳທາ ແລະ ເມືອງ ປາກທາ ແຂວງ ບໍ່ແກ້ວ

# ການຝຶກອົບຮົມໃນຄັ້ງນີ້ແມ່ນໄດ້ຮັບທຶນຊ່ວຍເຫຼືອຈາກ ສະຫະພັນວາງແຜນຄອບຄົວສາກົນ (International Planned Parenthood Federation). ພາຍໃຕ້ ໂຄງການ "ເຊື່ອມສານແມ່ປອດໄພ ແລະ ໂຄງການຕອບສະໜອງ (RESPOND)"













# ລົງຕິດຕາມການເຮັດໜານຜັກ ແລະ ເຮັດຄອກຝຸ່ນບົ່ມ

ວັນທີ **15** ພຶດສະພາ **2023**

ສະມາຄົມສົ່ງເສີມສຸຂະພາບຄອບຄົວ ໃນນາມໂຄງການ "ຮ່ວມແຮງຮ່ວມໃຈ ຕ້ານ ແລະ ສະກັດກັ້ນພະຍາດໂຄວິດ-**19** ໃນເຂດທີ່ມີຄວາມສ່ຽງ". ໄດ້ຈັດກິດຈະກຳ ສະໜັບສະໜູນການປັບປຸງສວນຜັກຂອງໂຮງຮຽນ ມປາຍ ຊົນເຜົ່າ ເມືອງວຽງພູຄາ ໃຫ້ເປັນສູນການຮຽນຮູ້ ແລະ ສວນຜັກຕົວແບບຂອງເມືອງວຽງພູຄາ ເຊິ່ງໃນການປັບປຸງສວນຜັກດັ່ງກ່າວ ແມ່ນມີລາຍການດັ່ງນີ້: ການປັບປຸງຮົ້ວອ້ອມໜານຜັກ, ເຮືອນຮົ່ມບົ່ມຝຸ່ນ **1** ຫຼັງ, ສວນຜັກຈຳນວນ **170** ໜານ, ອ່າງເກັບນ້ຳເສຍເພື່ອຫົດຜັກ ແລະ ກະດານຂ່າວ ເຊິ່ງມີການຕິດຕາມ-ຊຸກຍູ້ຂອງພະນັກງານໂຄງການພາກສະໜາມ ແລະ ອຳນວຍການໂຮງຮຽນມປາຍຊົນເຜົ່າຢ່າງໃກ້ຊິດຕິດແທດໃນຊ່ວງໄລຍະການກໍ່ສ້າງແລະປັບປຸງເປັນໄລຍະ.

# ຈຸດປະສົງສະເພາະ

- ເພື່ອສົ່ງເສີມການສ້າງສວນຜັກຕົວແບບຂອງ ໂຮງຮຽນ ມປາຍ ຊົນເຜົ່າ ເມືອງວຽງພູຄາ **1** ແຫ່ງ.
- ເພື່ອສ້າງອາຊີບ ແລະ ສົ່ງເສີມທາງດ້ານໂພຊະນາການໃຫ້ແກ່ກຸ່ມເປົ້າໝາຍຂອງໂຄງການໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນກວ່າເກົ່າ











# ສສສຄໄດ້ມອບພັນໄກ່, ຫົວອາຫານ ແລະ ຢາວັກຊິນສຳລັບສັດ ໃຫ້ກຸ່ມເປົ້າໝາຍໂຄງການ







ວັນທີ່ 2 ມິຖຸນາ 2023

ສະມາຄົມສົ່ງເສີມສຸຂະພາບຄອບຄົວ ໃນນາມໂຄງການ "ຮ່ວມແຮງຮ່ວມໃຈ ຕ້ານ ແລະ ສະກັດກັ້ນພະຍາດໂຄວິດ-19 ໃນເຂດທີ່ມີຄວາມສ່ຽງ". ໄດ້ຈັດກິດຈະກຳສະໜັບສະໜູນການລ້ຽງໄກ່ ໃຫ້ແກ່ກຸ່ມເປົ້າໝາຍ 4 ບ້ານຄື: ບ້ານທ້ຽວ, ບ້ານວຽງສະຫວ່າງ, ບ້ານດົງວຽງ ແລະ ບ້ານໃໝ່ ເມືອງວຽງພູຄາ ແຂວງຫຼວງນ້ຳທາ ເຊິ່ງໃນມື້ໄດ້ຮັບກຽດເປັນປະທານຊີ້ນຳຂອງທ່ານ ບຸນມາ ພິລະວົງ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງວຽງພູຄາ ແລະ ທ່ານ ດຣ ນາງ ສົມປອງ ອາດທອງ ຫົວໜ້າຫ້ອງການສາທາລະນະສຸກແຂວງ, ມີທັງ ອຳນາດການປົກຄອງບ້ານ, ປະຊາຊົນກຸ່ມເປົ້າຫມາຍ, ພະນັກງານລັດຂັ້ນແຂວງ-ຂັ້ນເມືອງ ແລະ ພະນັກງານໂຄງການເຂົ້າຮ່ວມ. ການສະໜັບສະໜູນດັ່ງກ່າວລວມມີ: ພັນໄກ່ລາດພື້ນບ້ານຈຳນວນ 240 ໂຕ, ຫົວອາຫານ ຈຳນວນ 12 ເປົາ, ຢາສັກວັກຊິນ ແລະ ອຸປະກອນຈຳນວນ 12 ຊຸດ ລວມມູນຄ່າທັງໝົດ 27,816,000 ກີບ.

# ຈຸດປະສົງສະເພາະ

- ເພື່ອຈັດຊື້ ພັນໄກ່ ແລະ ສະໜອງພັນສັດ, ຫົວອາຫານ ແລະ ຢາສັກວັກຊິນໄກ່ໃຫ້ແກ່ ກຸ່ມເປົ້າໝາຍຂອງໂຄງການ ຈຳນວນ 8 ຄອບຄົວ ແລະ 8 ໂຮງຮຽນ ໃນ 2 ເມືອງ.
- ເພື່ອສ້າງອາຊີບ ແລະ ສົ່ງເສີມທາງດ້ານໂພຊະນາການໃຫ້ແກ່ກຸ່ມເປົ້າໝາຍຂອງໂຄງການໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນກວ່າເກົ່າ




# ຝຶກອົບຮົມ ການດູແລເດັກເກີດໃໝ່

ສະມາຄົມສົ່ງເສີມສຸຂະພາບຄອບຄົວ ແລະ ທີມງານຄູຝຶກ ຈາກກະຊວງສາທາລະນະສຸກ ໄດ້ລົງຈັດຕັ້ງປະຕິບັດກິດຈະກຳ ການຝຶກອົບຮົມ ການດູແລເດັກເກີດໃໝ່ (EENC)ໃຫ້ແກ່ພະນັກງານ ໂຮງໝໍນ້ອຍ ທີ່ແຂວງ ຜົ້ງສາລີ ແລະ ແຂວງເຊກອງ

ເຊິ່ງໃນແຂວງຜົ້ງສາລີ ແມ່ນໄດ້ກວມເອົາ 9 ໂຮງໝໍນ້ອຍ ໃນ 3 ເມືອງເປົ້າໝາຍ ຄື: ເມືອງ ຂວາ 4 ໂຮງໝໍນ້ອຍເຊັ່ນ: ໂຮງໝໍນ້ອຍ ກົກງິ້ວ, ລາດຊ້າງ, ບວມພັນ, ໂຮງໝໍນ້ອຍ ລະຮາງໃຫ່ຍ, ເມືອງໃໝ່ 3 ໂຮງໝໍນ້ອຍເຊັ່ນ: ໂຮງໝໍນ້ອຍ ກິ່ວກະຈຳ, ປາກແພ ແລະ ໂຮງໝໍນ້ອຍໂພນໄຊ ແລະ ເມືອງສຳພັນ 2 ໂຮງໝໍນ້ອຍເຊັ່ນ: ໂຮງໝໍນ້ອຍ ມູຈີກາງ ແລະ ລາວເລວ, ເຊິ່ງມີຜູ້ເຂົ້າຮ່ວມໃນຄັ້ງນີ້ ລວມທັງໝົດມີ: 21 ທ່ານ ເຊິ່ງເປັນຍິງ 16 ທ່ານ.

ໃນແຂວງເຊກອງ ແມ່ນກວມເອົາ 17 ໂຮງໝໍນ້ອຍຈາກ ເມືອງດາກຈຶງ: 10 ໂຮງໝໍນ້ອຍເຊັ່ນ: ອາຢູນ,ດາກດຶມ, ຕັງເຢີງ, ດາກດຶມ, ຊຽງຫຼວງ, ຈະລຶງ, ຕາຕີ, ດາກມວນ, ດາກປາຣ, ປຣາວ ແລະ ເມືອງກະລຶມ: 7 ໂຮງໝໍນ້ອຍເຊັ່ນ: ນ້ອຍທົ່ງແຄນ, ສອງຄອນ, ແຈະແລະ,ຕະນຶງ, ຕະວາງ, ໂກ ແລະ ໂຮງໝໍນ້ອຍ ຕາດຊຳນໍ້າອຸ່ນ(ເຊິ່ງເປັນໂຮງໝໍນ້ອຍ ຕັ້ງໃໝ່ ໃນເມືອງກະລຶມ)

ຈຸດປະສົງແມ່ນ ເພື່ອເປັນການເພີ່ມທັກສະການຊ່ວຍເກີດໃຫ້ພະນັກງານໂຮງໝໍນ້ອຍ, ເພີ່ມຄຸນນະພາບການບໍລິການ ລະຫວ່າງຜູ້ໃຫ້ບໍລິການ ກັບຜູ້ມາໃຊ້ບໍລິການ, ເພື່ອເຮັດໃຫ້ສະຖານທີ່ບໍລິການມີຄວາມສະອາດ, ຄວາມປອດໄພ, ຄວາມພ້ອມ, ຄວາມເປັນມິດຕໍ່ແມ່ ແລະ ເດັກ ແລະ ການເຄົາລົບນັບຖືຕໍ່ຜູ້ມາໃຊ້ບໍລິການຢູ່ໂຮງໝໍນ້ອຍ ແລະ ເພື່ອເຮັດໃຫ້ຊຸມຊົນມີຄວາມເຊື່ອໝັ້ນໃນການໃຫ້ບໍລິການຂອງແພດໝໍ ແລະ ເຮັດໃຫ້ຊຸມຊົນເຂົ້າມາໃຊ້ບໍລິການຢູ່ໃນສະຖານທີ່ໃຫ້ບໍລິການ ຫຼື ໂຮງໝໍນ້ອຍຫຼາຍຂຶ້ນ ເຊັ່ນ: ມາຝາກທ້ອງ, ເກີດລູກ, ກວດຫຼັງເກີດ, ສັກຢາ ແລະ ອື່ນໆ

ນອກຈາກນັ້ນ ທີມງານ ສະມາຄົມ ສົ່ງເສີມສຸຂະພາບຄອບຄົວ, ທີມງານ ອົງການແຄ ສາກົນ ປະຈຳລາວ ແລະ ທີມງານຄູຝຶກ ຈາກກະຊວງສາທາລະນະສຸກທີ່ໄດ້ນຳພາການຝຶກອົບຮົມໃນຄັ້ງນີ້ ລົງໄປຢ້ຽມຢາມບ້ານຂອງຜູ້ມາຮັບການບໍລິການໃນສະຖານທີ່ບໍລິການ ກໍຄືໂຮງໝໍນ້ອຍ ເພື່ອແນະນຳ ແລະ ປັບປຸງ ແກ້ໄຂບັນຫາ ຂອງການບໍລິການ ໃນໂຮງໝໍນ້ອຍ ທີ່ 2 ໂຮງໝໍນ້ອຍ ທີ່ເມືອງດາກຈຶງ ແຂວງເຊກອງ ແລະ 2 ໂຮງໝໍນ້ອຍ ຈາກເມືອງໃໝ່ ແຂວງຜົ້ງສາລີ

ນຳພາ ທີມໂດຍ ດຣ ບົວວັນ ສົມສະໜິດ ຈາກ ສະມາຄົມສົ່ງເສີມສຸຂະພາບຄອບຄົວ, ທີມງານຄູຝຶກ (EENC) ຂອງກະຊວງສາທາລະນະສຸກ ແລະ ທີມງານ ອົງການແຄ ສາກົນ ປະຈຳລາວ ໂດຍມີຜູ້ເຂົ້າຮ່ວມທັງໝົດ ໃນ 2 ແຂວງໃນຄັ້ງນີ້ມີ: 54 ທ່ານ ເຊິ່ງເປັນຍິງ 43 ທ່ານ.

ການລົງເຮັດກິດຈະກຳຄັ້ງນີ້ ແມ່ນໄດ້ຮັບທຶນຊ່ວຍເຫຼືອຈາກ ອົງການແຄ ສາກົນ ປະຈຳລາວ. ພາຍໃຕ້ ໂຄງການ "ໂພຊະນາການ 1000 ວັນທຳອິດຂອງຊີວິດ"

# ການຢ້ຽມຢາມຂອງຜູ້ບໍລິຫານແຜນງານ






ໃນລະຫວ່າງວັນທີ 21-27, ເດືອນ ກໍລະກົດ, ປີ 2023. ທ່ານ GREG GRAY, ຜູ້ບໍລິຫານແຜນງານປະຈຳພາກພື້ນຂອງສະຫະພັນວາງແຜນຄອບຄົວສາກົນ (IPPF) ໄດ້ມາຢ້ຽມຢາມ ແລະ ເຮັດວຽກກັບ ສະມາຄົມສົ່ງເສີມສຸຂະພາບຄອບຄົວ(ສສສຄ)ນະຄອນຫຼວງວຽງຈັນ, ພາຍໃຕ້ໂຄງການ RESPOND ໂດຍການເຂົ້າຮ່ວມສົນທະນາ, ນຳພາໂດຍ ທ່ານ ດຣ. ສຸພົນ ໄຊຍະວົງ, ອຳນວຍການສສສຄ, ຜູ້ບໍລິຫານແຜນງານ ສສສຄ, ທ່ານ ແສງເພັດ ທະບັນດິດ ພ້ອມດ້ວຍ ພະນັກງານປະຈຳຫ້ອງການຈຳນວນ 6 ທ່ານ.

ການເຂົ້າພົບຢ້ຽມຢາມຄັ້ງນີ້ ໄດ້ມີການແລກປ່ຽນສົນທະນາປຶກສາຫາລືເຖິງຄວາມຄືບໜ້າຂອງໂຄງການ, ການຈັດຕັ້ງປະຕິບັດກິດຈະກຳ ແລະ ການຂະຫຍາຍໄລຍະເວລາຂອງໂຄງການຮອດວັນທີ 31 ເດືອນ ກໍລະກົດ 2024

ການສົນທະນາປຶກສາຫາລືໃນການຢ້ຽມຢາມຄັ້ງນີ້ຖືວ່າໄດ້ຮັບຜົນສຳເລັດຕາມຈຸດປະສົງທີ່ຕັ້ງໄວ້.

# ພະນັກງານສສສຄ














































# ວິໄສທັດ ຂອງ ສສສຄ

ປາດຖະໜາໃຫ້ທຸກຄົນໃນສັງຄົມມີສຸຂະພາບແຂງແຮງ ແລະ ມີຄວາມຜາສຸກ ປະກອບສ່ວນໃຫ້ກັບ ສປປລາວ ຫຼຸດພົ້ນອອກຈາກສະຖານະພາບ ການເປັນປະເທດດ້ອຍພັດທະນາ